ຜ-ຟຟລ ຮ່ວມເປີດ BOOTH ໃນງານວາງສະແດງຫົວໜ່ວຍ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງລາວ ປີ 2026 (LAO MSME EXPO 2026)

EDL-GEN









ວັນທີ 25 ກຸມພາ ປີ 2026, ທີ່ສູນວາງສະແດງສິນຄ້າລາວ-ໄອເຕັກ, ງານວາງສະແດງຫົວໜ່ວຍ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງລາວ ປີ 2026 (LAO MSME EXPO 2026) ໄດ້ເປີດຂຶ້ນຢ່າງເປັນທາງການ. ພາຍໃຕ້ຫົວຂໍ້: “ຕ່ອງໂສ້ກະສິກຳປຸງແຕ່ງ ແລະ ການທ່ອງທ່ຽວຕິດພັນກັບທຳມະຊາດ ແບບທົ່ວເຖິງ.

ພິທີດັ່ງກ່າວໄດ້ຮັບກຽດຈາກ ທ່ານ ສະເຫຼີມໄຊ ກົມມະສິດ, ຮອງນາຍົກລັດຖະມົນຕີ ພ້ອມດ້ວຍ ທ່ານ ມະໄລທອງ ກົມມະສິດ, ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເຂົ້າຮ່ວມເປັນປະທານ.

ງານວາງສະແດງໃນຄັ້ງນີ້ຖືເປັນການລວມຕົວຄັ້ງຍິ່ງໃຫຍ່ຂອງຜູ້ປະກອບການ MSME ຈາກທົ່ວປະເທດ ແລະ ສາກົນ (ໄທ, ຫວຽດນາມ ແລະ ສປ ຈີນ.) ນອກນັ້ນ, ຍັງເປັນການສະເຫຼີມສະຫຼອງຜົນງານ 20 ປີ ແຫ່ງການສົ່ງເສີມ, ບາດກ້າວການຂະຫຍາຍຕົວຂອງ MSME ທີ່ເປັນກຳລັງຫຼັກໃນການຂັບເຄື່ອນເສດຖະກິດຂອງຊາດ.

ໃນໂອກາດນີ້ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ກໍ່ໄດ້ໃຫ້ການສະໜັບສະໜູນເຂົ້າຮ່ວມເປີດບູດວາງສະແດງພາຍໃນງານ ໂດຍນຳຜະລິດຕະພັນຂອງຊຸມຊົນທີ່ຢູ່ອ້ອມຂ້າງເຂື່ອນຂອງ ຜ-ຟຟລ ເຊັ່ນ: ຜະລິດຕະພັນກາເຟ ຈາກບ້ານເຊັດຄົດ ເປັນຊຸມຊົນຈາກເຂື່ອນໄຟຟ້າເຊເສັດ3 , ຜະລິດຕະພັນເຂົ້າ ຈາກ ບ້ານແຈ້ງ ເປັນຊຸມຊົນຕາມລ່ອງແມ່ນ້ຳເຂື່ອນໄຟຟ້ານ້ຳງື່ມ1, ໝາກແຕງ MELON ເປັນຜົນລະປູກຈາກສ່ວນສາທິດຂອງເຂື່ອນໄຟຟ້ານ້ຳມັງ3, ຜ້າຝ້າຍ ແລະ ຟອຍກວາດ ແມ່ນເປັນຜະລິດຕະພັນຈາກບ້ານ ສາມັກຄີໄຊ ແລະ ບ້ານພູຊ້າງ ເຊິ່ງເປັນບ້ານຈັດສັນ ຂອງເຂື່ອນໄຟຟ້ານ້ຳຄານ2-3 ທີ່ໄດ້ຮັບການສົ່ງເສີມ ແລະ ສະໜັບສະໜູນ ຈາກ ຜ-ຟຟລ ມາວາງສະແດງ ແລະ ຈຳໜ່າຍງານ. ໂດຍຈະສະທ້ອນເຫັນບົດບາດຂອງ ຜ-ຟຟລ ໃນການຮ່ວມພັດທະນາຊຸມຊົນ ແລະ ຍົກລະດັບສິນຄ້າທ້ອງຖິ່ນໃຫ້ກ້າວສູ່ຕະຫຼາດກວ້າງຂຶ້ນ.

ງານວາງສະແດງ LAO MSME EXPO 2026 ຈະດຳເນີນໄປຈົນເຖິງວັນອາທິດ ທີ 1 ມີນາ 2026 ເຊິ່ງນອກຈາກການວາງສະແດງສິນຄ້າແລ້ວ ຍັງມີກິດຈະກຳເສວະນາທຸລະກິດ, ການຈັບຄູ່ທຸລະກິດ ແລະ ພິທີມອບລາງວັນ MSME ດີເດັ່ນ.

ດັ່ງນັ້ນ ຈຶ່ງຂໍເຊີນຊວນທຸກທ່ານ ເຂົ້າຮ່ວມຊົມ ແລະ ຊຸກຍູ້ຜະລິດຕະພັນລາວ ໃນງານດັ່ງກ່າວເພື່ອຮ່ວມສ້າງແຮງສົ່ງເສີມໃຫ້ MSME ລາວ ໃຫ້ເຕີບໂຕຢ່າງເຂັ້ມແຂງ ແລະ ຍືນຍົງ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ